ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມຄົບຄະນະກາງສະໄໝ
# ຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV



ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເປີດກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ IV ໃນວັນທີ 19-20 ກໍລະກົດ 2023. ໂດຍການໃຫ້ກຽດເປັນປະທານ ແລະ ຊີ້ນໍາ ຂອງ **ສະຫາຍ ໄຊສົມພອນ ພົມວິຫານ ກໍາມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ** ຊຶ່ງມີ ຄະນະປະຈໍາພັກ, ຄະນະພັກຮາກຖານ, ຄະນະໜ່ວຍພັກຮາກຖານ, ສະມາ ຊິກພັກທີ່ມີຕໍາແໜ່ງບໍລິຫານຂັ້ນຮອງຫົວໜ້າກົມ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກ ທຫລ ໃນຄັ້ງນີ້ເປັນຂີດໝາຍສໍາຄັນຢ່າງຍິ່ງ ໃນການປະຕິບັດໜ້າທີ່ການເມືອງຢູ່ ອີງຄະນະພັກ ທຫລ. ພ້ອມນັ້ນ, ກໍໄດ້ມີການເຊື່ອມຊຶມກໍາແໜ້ນ ເອກະສານສໍາຄັນ ຂອງສູນກາງພັກ ເປັນຕົ້ນແມ່ນຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບ ເລກທີ 268/ຄລສພ ລົງວັນທີ 20 ມັງກອນ 2023 ວ່າດ້ວຍການດໍາເນີນກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກແຕ່ລະຂັ້ນ; ມາດຕະຖານ, ສິດ ແລະ ໜ້າທີ່ຂອງຄະນະບໍລິຫານງານພັກກະຊວງ-ອົງການ ແລະ ຂໍ້ຫ້າມສໍາລັບສະມາຊິກພັກ;

ກອງປະຊຸມໄດ້ທາບທາມ ຄວາມໄວ້ວາງໃຈຕໍ່ການນໍາພາລວມ ແລະ ບຸກຄົນໃນຄະນະບໍລິຫານງານພັກ ທຫລ ສະໄໝທີ IV. ພ້ອມກັນນີ້, ຈະໄດ້ລົງເລິກຕີລາຄາ ແລະ ປະກອບຄວາມຄິດຄວາມເຫັນຕໍ່ ບົດສະຫຼຸບ ການນໍາພາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງຕົນ ແລະ ຍຸດທະສາດ ພັດທະນາລະບົບສະຖາບັນການເງິນ-ເງິນຕາ 5 ປີ ຕິດພັນກັບການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໃນໄລຍະເຄິ່ງສະໄໝຜ່ານມາ ແລະ ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໂດຍ ສະເພາະວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ເພື່ອຍົກໃຫ້ເຫັນດ້ານດີ-ຜົນງານທີ່ຈະຕ້ອງເສີມຂະຫຍາຍ, ດ້ານອ່ອນ-ຂໍ້ຄົງຄ້າງທີ່ຈະຕ້ອງສຸມໃສ່ລົງເລິກ ປັບປຸງແກ້ໄຂ, ພ້ອມທັງ ຄົ້ນຄວ້າກໍານົດທິດທາງແຜນການຈັດຕັ້ງປະຕິບັດ ໃນອີກເຄິ່ງສະໄໝຕໍ່ໜ້າ ໃຫ້ແທດເໝາະກັບຄວາມສາມາດບົ່ມຊ້ອນ, ກໍາລັງແຮງທີ່ມີ ແລະ ໃຫ້ບັນລຸແຜນການໄດ້ ເມື່ອຮອດທ້າຍສະໄໝ, ນອກຈາກນີ້, ຍັງຈະມີການດໍາເນີນຊີວິດການເມືອງກາງສະໄໝ ພາຍໃນຄະນະບໍລິຫານງານພັກ ທຫລ ສະໄໝທີ IV ເພື່ອສໍາຫຼວດກວດກາຄວາມຮັບຜິດຊອບລວມ ແລະ ຂອງບຸກຄົນໃນຄະນະບໍລິຫານງານພັກ ເພື່ອເປັນການເສີມຂະຫຍາຍດ້ານຕັ້ງໜ້າ ແລະ ປັບປຸງແກ້ໄຂ ດ້ານອ່ອນ-ຂໍ້ບົກຜ່ອງທີ່ມີ ໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ ແລະ ເປັນການປັບປຸງກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢ່າງແທ້ຈິງ.








ພ້ອມນີ້, ກອງປະຊຸມໄດ້ຮັບການຊີ້ນຳຂອງສະຫາຍ **ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ກໍ່ໄດ້ຍົກບາງບັນຫາເພື່ອເນັ້ນໜັກ ໃນການຈັດຕັ້ງປະຕິບັດໃນຕໍ່ໜ້າຄື:**

ໜຶ່ງ: ໃນສະພາບເງື່ອນໄຂທີ່ມີທັງຄວາມຫຍຸ້ງຍາກ, ມີທັງສິ່ງທ້າທາຍທົດສອບ ຄະນະບໍລິຫານງານພັກ ທຫລ ຍິ່ງຕ້ອງເອົາໃຈໃສ່ ໃກ້ຊິດຕິດແທດ, ນຳພາການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ຖັນແຖວສະມາຊິກພັກ-ພະ ນັກງານ ຂອງຕົນໃຫ້ເປັນປົກກະຕິ ຕໍ່ເນື່ອງ, ກຳແໜ້ນໄດ້ແນວທາງ, ນະໂຍບາຍ ຂອງພັກ, ກົດໝາຍຂອງລັດ, ມະຕິ, ຄຳສັ່ງຕ່າງໆ ຂອງຂັ້ນເທິງ ກໍຄືລະບຽບການພາຍໃນ ແລະ ຫຼັກການວິຊາ ສະເພາະຂອງທະນາຄານ ບົນພື້ນຖານເຫັນໄດ້ບັນຫາ, ເຫັນໄດ້ທີ່ຕັ້ງ, ພາລະບົດບາດ ແລະ ຄວາມຮັບຜິດຊອບການເມືອງອັນສູງສົ່ງ ຂອງຕົນທີ່ພັກ-ລັດ ແລະ ປະຊາຊົນມອບໝາຍໃຫ້, ມີຄວາມທຸ່ນທ່ຽງຜ່ານຜ່າອຸປະສັກຕ່າງໆໃຫ້ໄດ້, ຮັບປະກັນຄຸນທາດການເມືອງໜັກແໜ້ນ, ນ້ຳໃຈຮັກຊາດ, ເສຍສະຫຼະເຫັນແກ່ຜົນປະໂຫຍດສ່ວນລວມເປັນທີ່ຕັ້ງ, ມີທັດສະນະຮັບໃຊ້ປະຊາຊົນຢ່າງຖືກຕ້ອງ. ຕີຖອຍ ແລະ ແກ້ໄຂບັນຫາການເສື່ອມຖອຍດ້ານແນວຄິດ, ປະກົດການຫຍໍ້ທໍ້, ພຶດຕິກຳທີ່ເປັນການສໍ້ລາດບັງຫຼວງໃນຖັນແຖວສະມາຊິກພັກ-ພະນັກງານ ໃຫ້ເຂັ້ມງວດ, ຂາດຕົວ ແລະ ທັນການ; ເອົາໃຈໃສ່ແກ້ໄຂແນວຄິດຈຸ້ມເຈື້ອ-ເຊື້ອສາຍ, ຄວາມບໍ່ໂປ່ງໃສ, ຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍ, ລະບຽບການຂອງລັດໃນຖັນແຖວພະນັກ ງານການນຳ, ພະນັກງານ-ສະມາຊິກພັກ ຢູ່ແຕ່ລະຂັ້ນ;

ສອງ: ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນຄະນະພັກ ໃຫ້ໜັກແໜ້ນ ໂດຍສະເພາະຄວາມເປັນເອກະພາບ-ຄວາມຕັດສິນໃຈໃນການປັບປຸງກົງຈັກ, ແກ້ໄຂ ບັນຫາພະນັກງານ. ສືບຕໍ່ເອົາໃຈໃສ່ປັບປຸງລະບົບການເມືອງໃຫ້ໜັກແໜ້ນ, ຍົກສູງບົດບາດ ການນຳພາ ຂອງຄະນະພັກ, ກໍ່ສ້າງ ແລະ ປັບປຸງຮາກຖານພັກ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດພັນກັບການປັບປຸງອົງການຈັດຕັ້ງມະຫາຊົນ ໃຫ້ຮູ້ເຄື່ອນໄຫວປະຕິບັດພາລະບົດບາດ ແລະ ໜ້າທີ່ ຂອງຕົນ ໂດຍສະເພາະແມ່ນການປະຕິບັດຂໍ້ແຂ່ງຂັນ ຂອງຕົນຕິດພັນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຂອງ ທຫລ ໃຫ້ສົມກັບເປັນແກນນຳໃນລະບົບການເມືອງຢ່າງແທ້ຈິງ.

ສາມ: ເອົາໃຈໃສ່ປັບປຸງແບບແຜນນຳພາ-ວິທີເຮັດວຽກໃຫ້ຄ່ອງຕົວກວ່າເກົ່າ, ໃຫ້ມີການປະສົມປະສານລະຫວ່າງ ຫຼັກການລວມສູນປະຊາທິປະໄຕ ກັບຫຼັກການນຳພາ ທີ່ແທດກັບສະພາບຈຸດພິເສດຕົວຈິງ ຂອງທະນາຄານ, ປັບປຸງການບໍລິຫານລັດໄປຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ, ມີການຕິດຕາມ, ກວດກາ, ຊຸກຍູ້ຊີ້ນຳ ການຈັດຕັ້ງປະຕິບັດ ແລະ ປະເມີນຜົນເປັນປະຈຳ. ປະຕິບັດລະບອບສ່ອງແສງລາຍງານ ໃນການເຄື່ອນໄຫວວຽກງານ ກໍ່ຄື ການແກ້ໄຂບັນຫາທີ່ເກີດຂຶ້ນ ຢູ່ແຕ່ລະຮາກຖານພັກ, ກົມກອງ ແລະ ໃນສັງຄົມໃຫ້ແທດ ເຖິງຕົວຈິງ ແລະ ທັນກັບສະພາບການ.

ສີ່: ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງທຸກຂັ້ນ ໄປຕາມທິດກະທັດຮັດ ແລະ ມີປະສິດທິພາບ; ເພີ່ມທະວີວຽກງານບຳລຸງກໍ່ສ້າງພະນັກງານ ໂດຍສະເພາະພະນັກງານວິຊາການ ໃນແຕ່ລະຂົງເຂດ, ແຕ່ລະຕຳແໜ່ງງານ ໃຫ້ສອດຄ່ອງກັບການເລັ່ງທວງຂອງສະພາບການໃນໄລຍະໃໝ່; ເອົາໃຈໃສ່ຄຸ້ມຄອງ-ນຳໃຊ້ພະ ນັກງານໃຫ້ດີ, ນຳໃຊ້ໃຫ້ຖືກກັບວິຊາສະເພາະ, ຖືກກັບຄວາມຮູ້-ຄວາມສາມາດ, ຖືກກັບພອນສະຫວັນ ຂອງແຕ່ລະຄົນຢ່າງເໝາະສົມ, ຊຸກຍູ້ສົ່ງເສີມພະນັກງານຜູ້ທີ່ມີຄຸນທາດການເມືອງໜັກແໜ້ນ, ມີຄວາມຕັ້ງຕໍ່ບໍລິສຸດຕໍ່ພັກ-ລັດ ແລະ ປະຊາຊົນ, ມີນ້ຳໃຈເສຍສະຫຼະສູງ, ມີຈິດໃຈຮັບໃຊ້ປະເທດຊາດ ແລະ ປະຊາຊົນ, ຜ່ານການທົດສອບຈາກຂະບວນວຽກງານຕົວຈິງ, ມີຫົວຄິດປະດິດສ້າງ ແລະ ມີຜົນງານຜົນສຳເລັດໃນໜ້າທີ່ ທີ່ຖືກມອບໝາຍໃຫ້ ເພື່ອສ້າງເປັນຜູ້ສືບທອດປ່ຽນແທນທີ່ມີຄຸນນະພາບ.

ຫ້າ: ຄະນະບໍລິຫານງານພັກ ທະນາຄານແຫ່ງ ສປປ ລາວ ຕ້ອງເພີ່ມທະວີ ຄວາມເປັນເຈົ້າການ ຕິດຕາມ, ກວດກາ ແລະ ຊຸກຍູ້ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ ຂອງພັກ, ກົດໝາຍ ແລະ ລະບຽບການ ຂອງລັດ ຢ່າງໃກ້ຊິດ ແລະ ເປັນປະຈຳ ເອົາໃຈໃສ່ວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ກໍ່ຄືແກ້ໄຂຜົນຂອງ ການກວດສອບ, ຜົນຂອງການກວດກາ ໃຫ້ທັນກັບສະພາບການ, ເຂັ້ມງວດ ແລະ ຂາດຕົວ.

ຫົກ: ສຸມໃສ່ແກ້ໄຂບັນຫາ-ຂໍ້ຄົງຄ້າງຕ່າງໆໃນການປະຕິບັດວຽກງານວິຊາສະເພາະ ທີ່ໄດ້ຍົກຂຶ້ນໃນກອງປະຊຸມກາງສະໄໝຂອງຄະນະທະນາຄານ ໃນຄັ້ງນີ້ ເປັນຕົ້ນແມ່ນ: ວຽກງານນະໂຍບາຍເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ໂດຍສະເພາະຄວາມຜັນຜວນຂອງ ອັດຕາແລກປ່ຽນ, ເງິນກີບອ່ອນຄ່າຢ່າງຕໍ່ເນື່ອງ ແລະ ຢູ່ໃນຈັງຫວະທີ່ໄວ ຊຶ່ງເຮັດໃຫ້ເງິນເຟີ້ ເພີ່ມຂຶ້ນໃນ

ລະດັບທີ່ສູງສຸດ ໃນຮອບ 2 ທົດສະວັດ, ພວກສະຫາຍ ຕ້ອງໄດ້ສົມທົບກັບກະຊວງ ປ້ອງກັນຄວາມສະຫງົບ ແລະ ພາກສ່ວນກ່ຽວຂ້ອງ ເຂັ້ມງວດການປະຕິບັດກົດໝາຍຄຸ້ມຄອງ ເງິນຕາຕ່າງປະເທດ, ເຂັ້ມງວດໃນການຕິດຕາມ, ກວດກາ ແລະ ເດັດຂາດປະຕິບັດມາດຕະການ ຕໍ່ຜູ້ລະເມີດລະບຽບການ, ການແລກປ່ຽນຊະຊາຍ, ການເກັງກຳໄລ ແລະ ອື່ນໆ ຢ່າງເຂັ້ມງວດ, ເດັດຂາດ, ບໍ່ຍົກເວັ້ນ. ພ້ອມນັ້ນ, ໃຫ້ເພີ່ມທະວີປະສານສົມທົບກັບບັນດາຂະແໜງການກ່ຽວຂ້ອງ ເພື່ອຮ່ວມກັນຄົ້ນຄວ້າ, ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະ ກິດ, ການເງິນ-ເງິນຕາ ໃຫ້ສອດຄ່ອງກົມກຽວກັນ ແລະ ເປັນລະບົບ ເພື່ອສ້າງພື້ນຖານໃຫ້ແກລະບົບເສດຖະກິດແຫ່ງຊາດ ມີຄວາມໜັກແໜ້ນ ແລະ ໃຫ້ໄດ້ຕາມມະຕິ ຂອງກອງປະຊຸມສະພາແຫ່ງຊາດ ໃນແຕ່ລະໄລຍະ ແລະ ແຜນງານ, ໂຄງການ ຂອງທະນາຄານ ວາງອອກ. ນອກຈາກນີ້ ກໍມີວຽກງານອື່ນໆ ທີ່ປິ່ນອ້ອມໃນວຽກງານທະນາຄານ.

ເຈັດ: ສືບຕໍ່ເພີ່ມທະວີການພົວພັນຮ່ວມມືກັບຕ່າງປະເທດ, ຍາດແຍ່ງ ດຶງດູດ ການຊ່ວຍເຫຼືອ, ຮ່ວມມື ແລະ ລົງທຶນ ຈາກບັນດາຄູ່ຮ່ວມພັດທະນາ, ປະເທດເພື່ອນມິດ ກໍ່ຄືອົງການຈັດຕັ້ງສາກົນຕ່າງໆ, ທຸກພາກສ່ວນທຸລະກິດ ທັງພາຍໃນ ແລະຕ່າງປະເທດ ໃຫ້ນັບມື້ ເພີ່ມຂຶ້ນ ຕິດພັນກັບການແກ້ໄຂບັນດາຂອດຂັ້ນການບໍລິການ, ສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກ ແລະ ນະໂຍບາຍຊຸກຍູ້ສົ່ງເສີມການດຶງດູດເອົາການລົງທຶນ ໃຫ້ແຂງແຮງ; ສືບຕໍ່ຍາດແຍ່ງການຊ່ວຍເຫຼືອດ້ານວິຊາການ ໃນຂອບສອງຝ່າຍ, ຫຼາຍຝ່າຍ ແນ່ໃສ່ສ້າງກຳລັງແຮງ ໃນການຈັດຕັ້ງປະຕິບັດຍຸດທະສາດພັດທະນາລະບົບສະຖາບັນການເງິນ ຂອງ ທຫລ ກໍຄື ນະໂຍບາຍເຊື່ອມໂຍງເສດຖະກິດ ຂອງ ສປປ ລາວ ໃຫ້ບັນລຸຜົນສຳເລັດ.

ສຸດທ້າຍ: ມອບໃຫ້ບັນດາສະຫາຍຄະນະພັກ ຈົ່ງຮີບຮ້ອນນຳເອົາເນື້ອໃນຈິດໃຈ ຜົນສຳເລັດກອງປະຊຸມກາງສະໄໝນີ້ ໄປເຜີຍແຜ່, ເຊື່ອມຊຶມໃຫ້ແກ່ສະມາຊິກພັກ-ພະນັກງານ ໄດ້ຮັບຮູ້, ເຂົ້າໃຈເລິກເຊິ່ງ, ທົ່ວເຖິງ ໂດຍສະເພາະແມ່ນສູ້ຊົນແກ້ໄຂບັນດາຈຸດອ່ອນ-ຂໍ້ຄົງຄ້າງ ທີ່ຕິດພັນກັບຄວາມຮັບຜິດຊອບ ຂອງແຕ່ລະຮາກຖານພັກ ກໍ່ຄືການນຳແຕ່ລະຂັ້ນ. ພ້ອມດຽວກັນນັ້ນ, ຮີບຮ້ອນຜັນຂະຫຍາຍບັນດາທິດທາງ, ຄາດໝາຍ ແລະ ໜ້າທີ່ຕົ້ນຕໍ ໃນເຄິ່ງທ້າຍສະໄໝ ໃຫ້ເປັນອັນລະອຽດ.

ພ້ອມນີ້, ກໍໄດ້ສະເໜີໃຫ້ອອກມະຕິ ຂອງຄະນະບໍລິຫານງານພັກ ທຫລ ວ່າດ້ວຍ ການແກ້ໄຂບັນຫາຄົງຄ້າງ, ຈຸດອ່ອນຈາກການປະເມີນ ຫຼື ຜົນໄດ້ຮັບຈາກກອງປະຊຸມກາງສະໄໝນີ້ ນັບທັງຄຳເຫັນສິ່ງຂ່າວ ຂອງພະນັກງານຫຼັກແຫຼ່ງຕໍ່ການນຳພາລວມ ຂອງຄະນະພັກທະນາຄານ. ຈາກນັ້ນ, ສ້າງເປັນແຜນຜັນຂະຫຍາຍ ໂດຍກຳນົດແຈ້ງບັນຫາທີ່ຈະຕ້ອງໄດ້ປັບປຸງແກ້ໄຂ, ມີຜູ້ຮັບຜິດຊອບ (ໜ່ວຍພັກ, ກົມກອງ). ກຳນົດເວລາແກ້ໄຂ, ມີຜູ້ຊີ້ນຳ ໂດຍແບ່ງໃຫ້ສະຫາຍ ກຳມະການຄະນະປະຈຳພັກ ເປັນຜູ້ຮັບຜິດຊອບໂດຍກົງ ເພື່ອສ້າງການຫັນປ່ຽນທີ່ແຂງແຮງ ແລະ ເລິກເຊິ່ງແທ້.




ມາຮອດນີ້ ກອງປະຊຸມຄົບຄະນະກາງສະໄໝຂອງຄະນະບໍລິຫານງານພັກ ທຫລ ສະໄໝທີ IV ທີ່ໄດ້ດໍາເນີນແຕ່ວັນທີ 19-20 ກໍລະກົດ 2023 ກໍ່ໄດ້ສິ້ນສຸດລົງ ດ້ວຍຜົນສໍາເລັດອັນຈົບງາມ ຕາມລະດັບຄາດໝາຍທີ່ວາງໄວ້.

**ຂ່າວ-ພາບ ຈາກ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ**